# ຄູ່ມືການເຝິກອົບຮົມ
# ຄູນຳພາ-ຄູເຝິກ
# ແລະ ອາສາສະໝັກ

# " ກຸ່ມເພື່ອນຮັກ "

ປີ 2008

ຈັດພິມໂດຍສູນອົບຮົມຮ່ວມພັດທະນາ
ອຸປະຖຳໂດຍ IOGT

# ພາກທີ I ຢາເສບຕິດ

## ບົດທີ 1
## ປະເພດຂອງຢາເສບຕິດ

**<u>ຈຸດປະສົງ</u>**: ຫຼັງຈາກເຝິກອົບຮົມບົດນີ້ຜູ້ເຂົ້າຮ່ວມສາມາດ

- ຮູ້ ແລະເຂົ້າໃຈເຖິງປະເພດຂອງຢາເສບຕິດ
- ສາມາດໄຈ້ແຍກໄດ້ປະເພດຂອງຢາເສບຕິດ
- ຮ້ອງເພງກ່ຽວກັບສິ່ງເສບຕິດໄດ້

**<u>ເວລາ</u>** 30 ນາທີ

**<u>ອຸປະກອນ</u>**: ເຈ້ຍເພງ,ເຈ້ຍໃຫຍ່,ເຝີດ,ສະກ໊ອດ

**<u>ບາດກ້າວ</u>**

1. ກ່າວຈຸດປະສົງແນະນຳຕົວ
2. ນຳພາຮ້ອງເພງ “ ເລື່ອງຂອງບຸນຕາ “
3. ລະດົມຄວາມຄິດລວມກ່ຽວກັບ “ ປະເພດຂອງຢາເສບຕິດ “

- ລະດົມຄວາມຄິດຈາກຜູ້ເຂົ້າຮ່ວມ ແລ້ວບັນທຶກໃສ່ເຈ້ຍແຜ່ນໃຫຍ່

ຫລັງຈາກນັ້ນຄູເຝິກຮຽບຮຽງ ແລະ ສະຫລຸບໃຫ້ຜູ້ເຂົ້າຮ່ວມຟັງ

4. ຄູເຝິກນຳສະເໜີປະເພດຂອງຢາເສບຕິດເປັນເຈ້ຍແຜ່ນໃຫຍ່ ( 4 ແຜ່ນ )

**<u>ເນື້ອໃນ</u>**

1. ເພງ “ ເລື່ອງຂອງບຸນຕາ “

| | |
|---|---|
| # ຈະຂໍກ່າວ | ເລື້ອງລາວເປັນມາ |
| ມີຄົນຊື່ບຸນຕາ | ເປັນນັກຮຽນດີເດັ່ນ |
| ໃນໂຮງຮຽນ | ກໍສະແດງໃຫ້ເຫັນ ( ຊ້ຳ ) |
| ລາວເປັນຄົນດີເດັ່ນ | ຮ່ຳຮຽນພຽນຂະຫຍັນ |
| # ໝົດປີໜຶ່ງ | ສອບເລື່ອນຊັ້ນຜ່ານໄປ |
| ບຸນຕາເລີ່ມເຕີບໃຫຍ່ | ໄດ້ພົວພັນກັບເພື່ອນ |
| ໃນຄອບຄົວ | ພໍ່ກໍໄດ້ບອກເຕືອນ ( ຊ້ຳ ) |
| ບຸນຕາຟັງຄວາມເພື່ອນ | ອອກໂຮງຮຽນໜີໄປ |

# ໂອຍ...... ເສົ້າໃຈເຫຼືອທົນ
ເພື່ອນຝູງທຸກຄົນ ຕ່າງກໍເຫັນໃຈບຸນຕາ
ທຸກຄົນຮູ້ ເມື່ອໄດ້ຊາບຂ່າວມາ (ຊໍ້າ)
ບຸນຕາຕິດຢາບ້າ ໄປສົມສະຫງ່າເພື່ອປິ່ນປົວ
# ຈຶ່ງຂໍຝາກ ເພື່ອອຸທາຫອນ
ບໍ່ແມ່ນມາບອກສອນ ເພື່ອນນັກຮຽນທົ່ວໜ້າ
ຈົ່ງຫ່າງໄກ ສິ່ງເສບຕິດນາໆ ( ຊໍ້າ )
ມາພ້ອມກັນຕັ້ງໜ້າ ຮໍ່າຮຽນເຖີດນາເພື່ອນເອີຍ

2. <u>***ປະເພດຢາເສບ 4 ປະເພດ:***</u>

1. **ປະເພດອອກລິດກົດປະສາດ** :

ຢາເສບຕິດປະເພດນີ້ຈະທໍາລາຍປະສິດທິພາບການຮັບຮູ້ຂອງລະບົບປະສາດ ຢາເສບຕິດກຸ່ມນີ້ໄດ້ແກ່ : ຝິ່ນ,ມອກຝີນ,ເຮໂຣອິນ ແລະ ສານລະເຫີຍ

2. **ປະເພດອອກລິດກະຕຸ້ນປະສາດ** :

ລິດຢາຈະກະຕຸ້ນໃຫ້ຮ່າງກາຍຫຼັ່ງສານໃນຮ່າງກາຍບາງຊະນິດອອກມາຫຼາຍເກີນຄວາມຈໍາເປັນ,ເຮັດໃຫ້ປະສາດຕື່ນຕົວ,ເກີດຄວາມຮູ້ສຶກວ່າມີກໍາລັງ,ເມື່ອຫມົດລິດຢາຮ່າງກາຍຈະອ່ອຍເພຍໝົດແຮງເພາະຮ່າງກາຍຂາດຄວາມສົມດູນ. ຢາກຸ່ມນີ້ໄດ້ແກ່ຢາບ້າ,ຢາອີ,ໂຄເຄນ ແລະ ໃບກະທ່ອນ (ຄືໃບຕອງ)

3. **ປະເພດຫຼອນປະສາດ**

- ລິດຂອງຢາຈະເຮັດໃຫ້ເກີດອາການປະສາດຫຼອນ
- ປະສາດສໍາຜັດທັງ 5 ຂອງຮ່າງກາຍປັ່ນປ່ວນຜິດປົກກະຕິ, ເບິ່ງເຫັນພາບຜິດໄປຈາກຄວາມເປັນຈິງ, ເກີດພາບຫຼອນ ແລະ ໄດ້ຍິນສຽງແວ່ວ ຢາເສບຕິດກຸ່ມນີ້ໄດ້ແກ່: ຢາເຄ, LSD, ເຫັດຂີ້ຄວາຍ

4. **ປະເພດອອກລິດຫຼາຍຢ່າງ**

ປະສົມປະສານກັນມີທັງກະຕຸ້ນປະສາດ, ກົດປະສາດ, ຫຼອນປະສາດເຊັ່ນ: ກັນຊາ ໂທດຂອງກັນຊາ : ທໍາລາຍສະໝອງເຮັດໃຫ້ຄວາມຈໍາເສື່ອມ, ຮ່າງກາຍຈະອ່ອນແອ, ເສື່ອມສະມັດຖະພາບທາງເພດ ແລະ ເຮັດໃຫ້ເປັນມະເຮັງປອດ. ສູບຢາຍັດໄສ້ກັນຊາ 4 ກອກ ພິດໄພທີ່ໄດ້ຮັບຈະເທົ່າກັບສູບຢາ 20 ກອກ.

# ບົດທີ 2
# ຜົນກະທົບຂອງຢາເສບຕິດ

**<u>ຈຸດປະສົງ</u>**: ຫຼັງຈາກເຝິກອົບຮົມບົດນີ້ຜູ້ເຂົ້າຮ່ວມສາມາດ

- ອະທິບາຍໄດ້ຜົນກະທົບຂອງສິ່ງເສບຕິດຕໍ່ຕົນເອງ,ຄອບຄົວ ແລະສັງຄົມ
- ອະທິບາຍເນື້ອໃນເພງ " ຢ່າ "

**<u>ເວລາ</u>** 20 ນາທີ

**<u>ອຸປະກອນ</u>**: ເຈ້ຍໃຫຍ່,ເຟີດ,ສະກ໊ອດ,ເຈ້ຍບົດເພງ

**<u>ຂັ້ນຕອນການດຳເນີນ</u>**

1. ນຳພາຮ້ອງເພງ " ຢ່າ " ສົນທະນາກ່ຽວກັບເນື້ອໃນຂອງເພງ
2. ແບ່ງ 3 ກຸ່ມ ຄົ້ນຄ້ວາຄວາມຄິດຈາກຜູ້ເຂົ້າຮ່ວມ " ຜົນກະທົບຂອງຜູ້ເສບ,ຕໍ່ຄອບຄົວ,ຕໍ່ສັງຄົມ " 3 ກຸ່ມຄົ້ນຄວ້າຄົນລະຫົວຂໍ້
3. ແຕ່ລະກຸ່ມນຳສະເໜີ
4. ຄູເຝິກສະຫຼຸບຖ້າຜູ້ເຂົ້າຮ່ວມບອກບໍ່ໝົດໃຫ້ຄູເຝິກຕື່ມໃສ່

**<u>ເນື້ອໃນ</u>**

**ເພງ " ຢ່າ "**

| | | |
|---|---|---|
| # | ຢ່າຈັບຢ່າລອງ | ຢ່າຕ້ອງຢ່າເສບ |
| | ຢ່າໄປພົວພັນ | ຢ່າດົມຢ່າດື້ |
| | ຢ່າໄປຊອກຊື້ | ສິ່ງເສບຕິດນາໆ |
| # | ຢ່າຈັບຢ່າລອງ | ຢ່າຂ້ອງຢ່າກ່ຽວ |
| | ຮ່າງກາຍແຫ້ງຫ່ຽວ | ເມື່ອດື່ມເຂົ້າໄປ |
| | ເສຍຜູ້ເສຍຄົນ | ບໍ່ດົນວາຍວອດ |
| | ຄວາມທຸກລາມໄປຮອດ | ຄອບຄົວເຮືອນຊານ |

2.<u>**ຜົນກະທົບຂອງຢາເສບຕິດ**</u>

1.<u>**ຜົນກະທົບຕໍ່ຕົນເອງ**</u>

- ຮ່າງກາຍຈ່ອຍຜອມ,ອ່ອນເພຍ
- ປະສາດຫຼອນ,ເສຍຈິດເປັນບ້າ
- ກາຍເປັນຄົນຂີ້ລັກ,ນັກເລງອັນຕະພານ
- ເສຍຊີວິດ

2.<u>**ຜົນກະທົບຕໍ່ຄອບຄົວ**</u>

- ຄອບຄົວມີການຜິດຖຽງກັນ
- ທຸກຍາກ ແລະເປັນໜີ້ສິນ
- ຂາດແຮງງານ
- ສະຖາບັນເຊື້ອມໂຊມ
- ເສຍໜ້າ,ເສຍຕາ

3.<u>**ຜົນກະທົບຕໍ່ສັງຄົມ**</u>

- ບ້ານເມືອງມີຄວາມວຸ້ນວາຍ
- ຂາດກຳລັງພັດທະນາ
- ບໍ່ມີໃຜຢາກເຂົ້າມາຊ່ວຍເຫຼືອ
- ຄວາມກ້າວໜ້າຂອງສັງຄົມຊັກຊ້າ

# ບົດທີ 3
# ວິທີປ້ອງກັນຢາເສບຕິດ

**ຈຸດປະສົງ**: ຫຼັງຈາກເຝິກອົບຮົມບົດຮຽນນີ້ສຳເລັດແລ້ວ ຜູ້ເຂົ້າຮ່ວມສາມາດ:

- ອະທິບາຍໄດ້ວິທີປ້ອງກັນ, ການປະຕິບັດຕົວໃຫ້ຫ່າງໄກຈາກຢາເສບຕິດ ແລະການຄົ້ນຄິດເຖິງເປົ້າໝາຍຂອງຊີວິດ

**ເວລາ** 45 ນາທີ

**ອຸປະກອນ**: ເຈ້ຍ 4 ແຜ່ນ,ເຟີດ 4 ກ້ານ, ເກມ

**ຂັ້ນຕອນການດຳເນີນ**:

1. ກ່າວຈຸດປະສົງ ຂອງບົດ
2. ຈັດແບ່ງກຸ່ມລະດົມຄວາມຄິດຂອງແຕ່ລະກຸ່ມ,ຄຳຖາມ: ຢາກປ້ອງກັນບໍ່ໃຫ້ຕິດຢາເສບຕິດເຮົາຕ້ອງເຮັດແນວໃດ ?
3. ແຕ່ລະກຸ່ມຄົ້ນຄ້ວາ ແລ້ວໃຫ້ຕາງໜ້າກຸ່ມຂຶ້ນນຳສະເໜີ
4. ຄູເຝິກສະຫຼຸບຫົວຂໍ້ເວົ້າເຖິງເນື້ອໃນຂອງວິທີປ້ອງກັນຢາເສບຕິດ
5. ຫຼິ້ນເກມປ້ອງກັນຕົວ

**ເນື້ອໃນ**:

1. **ວິທີການປ້ອງກັນຢາເສບຕິດ**

- ຄວາມເຊື່ອໝັ້ນວ່າຕົນເອງເປັນຄົນມີຄຸນຄ່າ
- ຄວາມເຊື່ອໝັ້ນໃນຕົນເອງ
- ມີເປົ້າໝາຍສຳຄັນຂອງຊີວິດ
- ຄວາມມີຈະຣິຍະທຳ
- ຄວາມຮູ້ຄວາມເຂົ້າໃຈເລື່ອງຢາເສບຕິດ
- ສາຍສຳພັນໃນຄອບຄົວ
- ກິດຈະກຳທີ່ຫຼາກຫຼາຍ

2. **ເກມວິທີປ້ອງກັນຢາເສບຕິດ**

- ເຮັດເປັນວົງມົນໃຫຍ່
- ໃຫ້ຄົນໜຶ່ງມັດຕາໂດຍທີ່ຖືໝາກບານໄວ້
- ຄົນຖືໝາກບານດີກ ຫຼື ແກ່ວງໝາກບານໃສ່ຄົນທີ່ເຮັດເປັນວົງມົນ
- ຄົນໃນວົງມົນຕ້ອງພະຍາຍາມຫຼົບໜີໝາກບານ
- ໃຜຖືກໝາກບານຕ້ອງເປັນຄົນມັດຕາ
- ຫຼິ້ນຈົນກ່ວາບໍ່ມີຄົນຖືກໝາກບານ

## ພາກທີ II ເຫຼົ້າ

# ບົດທີ 4
# ຄວາມຮູ້ກ່ຽວກັບເຫຼົ້າ

**<u>ຈຸດປະສົງ</u>**: ຫຼັງຈາກເຝິກອົບຮົມ ຜູ້ເຂົ້າຮ່ວມສາມາດ

- ບອກໄດ້ຄວາມໝາຍກ່ຽວກັບເຫຼົ້າ
- ຮ້ອງເພງກ່ຽວກັບເຫຼົ້າໄດ້

**<u>ເວລາ</u>**: 30 ນາທີ

**<u>ອຸປະກອນ</u>**: ເຈ້ຍເພງ,ເຈ້ຍໃຫຍ່,ເຟີດ,ສະກ໊ອດ

**<u>ບາດກ້າວ ຫຼື ຂັ້ນຕອນ</u>**

1. ກ່າວຈຸດປະສົງແນະນຳຕົວ
2. ນຳພາຮ້ອງເພງ " ເມົາ "
3. ລະດົມຄວາມຄິດລວມກ່ຽວກັບ " ເຫຼົ້າ " ແມ່ນຫຍັງ ?
   - ຜູ້ເຂົ້າຮ່ວມຕອບ ໃຫ້ຄູເຝິກຈົດບັນທຶກ ຫຼັງຈາກນັ້ນສະຫຼຸບ

**<u>ເນື້ອໃນ</u>**:

1. **ເພງ " ເມົາ "**

| | | |
|---|---|---|
| ສອຍ | ຕື່ນເຊົ້າ | ກະເມົາ |
| | ສວາຍມາ | ກະເມົາ |
| | ແລງມາ | ກະເມົາ |
| | ເດິກໆມາ | ກະແຮງເມົາ ( ຊ້ຳ ) |
| | o ຄົນເມົາ | ເວົ້າຈາອໍ້ແອ້ |
| | ຢ່າມິແຕ່ | ຊີ້ໜ້າຊີ້ຫຼັງ |
| | ໃຫ້ລະວັງ | ພະຍາດຈະມາຢາມ ( ຊ້ຳ ) |
| | ມັນຈະມາຖາມ | ຫາເຈົ້າກ່ອນໝູ່ ( ຊ້ຳ ) |

ສອຍ

o ເລີກເມົາ ເຫງົາຫງອຍຊືມເສົ້າ
ພະຍາດຂອງເຈົ້າ ມາຢັ້ງມມາຢາມ
ຕັບແຂງຕື່ມ ເຂົ້າມາຕໍ່ຕາມ ( ຊໍ້າ )
ຂໍໃຫ້ຄິດນຳ ຄອບຄົວເຈົ້າແດ່

ຄິດນຳແດ່ ຄິດນຳລູກແດ່
ຄິດນຳແດ່ ຄິດນຳແມ່ແດ່
ຄິດນຳແດ່ ຄິດນຳຄອບຄົວເຈົ້າແດ່..... ( ຊໍ້າ )

2.**ເຫຼົ້າແມ່ນຫຍັງ** ?

ເຫຼົ້າແມ່ນສິ່ງເສບຕິດປະເພດກົດລະບົບສູນກາງປະສາດປະລິມານທາດເຫຼົ້າເຂົ້າເຈືອປົນຢູ່ໃນເລືອດເຖິງຂີດສູງສຸດພາຍຫຼັງທີ່ໄດ້ຢຸດດື່ມແລ້ວປະມານ 30-60 ນາທີ.

# ພາກທີ III ຄວາມຮູ້ກ່ຽວກັບເອດ

## ບົດທີ 5
## ປັດໃຈທີ່ພາໃຫ້ຕິດເຊື້ອໂລກ

**ຈຸດປະສົງ**: ຫຼັງຈາກເຝິກອົບຮົມແລ້ວຜູ້ເຂົ້າຮ່ວມສາມາດ

- ອະທິບາຍໄດ້ເຖິງປັດໃຈຕ່າງໆທີ່ພາໃຫ້ຕິດເຊື້ອໂລກເອດ
- ບອກໄດ້ເພດຍິງ ແລະ ເພດຊາຍໃຜມີໂອກາດຕິດເຊື້ອເອດຫຼາຍກ່ວາກັນ

**ເວລາ**: 60 ນາທີ

**ອຸປະກອນ**: ເຈ້ຍໃຫຍ່,ເຊີ້ງ " ຮ່ວມກັນສະກັດກັ້ນ "

**ຂັ້ນຕອນດຳເນີນ**

1. ນຳພາເຊີ້ງ " ຮ່ວມກັນສະກັດກັ້ນ "
2. ແບ່ງກຸ່ມຄົ້ນຄ້ວາ
3. ແຕ່ລະກຸ່ມຫຼີ້ນເກມຮ່ວມກຸ່ມຕາມວັນເກີດແລ້ວຈົກສະຫຼາກຄຳຖາມໄປຄົ້ນຄ້ວາ
4. ຕາງໜ້າກຸ່ມນຳສະເໜີ
5. ຄູເຝິກສະຫຼຸບ

**ເນື້ອໃນ**

1. # **ເຊີ້ງ " ຮ່ວມກັນສະກັດກັ້ນ "**

ເອີ້ນມາເຮົາມາ ພ້ອມກັນຕ້ານເອດ
ເພາະມັນເປັນເຫດ ສ້າງຄວາມມົວໝອງ
ຢ່າຄິດຢາກລອງ ພົວພັນສິ່ງຮ້າຍ
ພວກນ້ອງພວກອ້າຍ ສ້າງແຕ່ຄວາມດີ
ຢ່າໃຫ້ມັນມີ ສິ່ງທີ່ບໍ່ຄ່ອງ
ພວກເຮົາພີ່ນ້ອງ ຕ້ອງຫ່າງໄກໜີ
ແລ້ວເຮົາຈະມີ ຊີວິສົດຊື່ນ
ຈົ່ງຮີບຟ້າວຕື່ນ ເບິ່ງໂລກໂລກາ
ຈົ່ງຢ່າໄດ້ມາ ມົ້ວສຸມທາງເພດ

| | |
|---|---|
| ນັ້ນມາເປັນເຫດ | ຂົ່ມເພດຍິງເຮົາ |
| ຢ່າຖືວ່າເຂົາ | ນັ້ນເປັນດອກໄມ້ |
| ທີ່ບານຢູ່ໃກ້ | ມໍ່ມີແຄມທາງ |
| ຈົ່ງຮວມພະລັງ | ສ້າງສິ່ງນີ້ໄວ້ |
| ເພື່ອຊາລາວໄດ້ | ຮຸ່ງເຮືອງຈະເລີນ |

ໂຮ.................................ຮິ້ວ

2. <u>ປັດໃຈທີ່ພາໃຫ້ຕິດເອດມີ 7 ປັດໃຈ</u>

- **ດ້ານສຶກສາ**

- ເດັກຫຼາຍຄົນອອກໂຮງຮຽນກ່ອນກຳນົດຍ້ອນຫຼາຍສາເຫດພາໃຫ້ສ້າງຄອບຄົວແຕ່ເຍົາໄວ ແລະ ມີໂອກາດປະຮ້າງກັນງ່າຍ
- ເດັກ ແລະໄວໜຸ່ມຫຼາຍຄົນບໍ່ໄດ້ຮຽນເພດສຶກສາ
- ພໍ່ແມ່ຜູ້ປົກຄອງບໍ່ອະນຸຍາດໃຫ້ລູກຮຽນຮູ້ເລື່ອງເພດ
- ສັງຄົມບໍ່ຍອມຮັບໃຫ້ຍິງໜຸ່ມຮຽນຮູ້ເພດ
- ພໍ່ແມ່ບໍ່ສາມາດສົ່ງລູກໄດ້ຮຽນຕໍ່ຈົນຈົບ, ດ້ອຍການສຶກສາ,ຫາວຽກເຮັດໄດ້ຍາກ
- ໂອກາດທີ່ແມ່ບ້ານຈະໄດ້ຮຽນຮູ້ໂລກເອດ ແລະ ພຕພ ມີໜ້ອຍ

- **ດ້ານສາທາລະນະສຸກ**

- ວຽກງານສາທາລະນະສຸກບໍ່ສາມາດຕອບສະໜອງໄດ້ຢ່າງກ້ວາງຂວາງໂດຍສະເພາະແມ່ນການບໍລິການປິ່ນປົວ ພຕພ
- ຊາວໜຸ່ມບໍ່ມີບ່ອນສະເພາະໃນການກວດພະຍາດ
- ຜູ້ຊາຍບໍ່ມັກໄປໂຮງໝໍ, ຈະອາໄສຊື້ຢາກິນເອງເວລາທີ່ເປັນ ພຕພ
- ບັນຫາເລື່ອງເພດເປັນເລື່ອງປິດລັບສຳລັບແມ່ຍິງລາວ

- **ຄວາມເຊື່ອທາງສັງຄົມ**

- ພຶດຕິກຳຂອງເພດຊາຍ : ສ່ວນຫຼາຍບໍ່ມັກເອົາໃຈໃສ່ຕໍ່ສຸຂະພາບ, ເວລາທີ່ເປັນໂລກເອດຈຶ່ງທຳໃຈບໍ່ໄດ້.
- ການຍຶດຖືພຶດຕິກຳຕ່າງໆຂອງຜູ້ຊາຍພາໃຫ້ມີຄວາມສ່ຽງຕໍ່ການຕິດໂລກເອດເຊັ່ນ:ບໍ່ເອົາໃຈໃສ່ຕໍ່ການປິ່ນປົວ ພຕພ
- ຜູ້ຊາຍມັກດື່ມເຫຼົ້າ ແລະ ເສບສານເສບຕິດ, ເວລາເມົາແລ້ວມັກມີເພດສຳພັນທີ່ບໍ່ໃຊ້ຖົງຢາງອະນາໄມ
- ຜູ້ຊາຍສີດຢາເສບຕິດເຂົ້າຮ່າງກາຍຫຼາຍກວ່າຜູ້ຍິງ

- **ຄວາມເປັນເຈົ້າຂອງ**

- ເມື່ອຜູ້ຊາຍໄດ້ອັນໃດໜຶ່ງຈາກຜູ້ຍິງຈະຖືວ່າຕົນເອງເປັນເຈົ້າຂອງ ແລະ ສາມາດບັນຊາໃຫ້ເຮັດຫຍັງກໍໄດ້ຕາມໃຈ ແລະ ມີສິດຫ່ວງຫ້າມມີສິດຄອບຄອງທຸກຢ່າງໃນຕົວຂອງຜູ້ຍິງ, ມີສິດທີ່ຈະຮັບເອົາ ຫຼື ປະຖິ້ມກໍໄດ້.
- ຖ້າແມ່ນແຟນໂຕແລ້ວຫ້າມໄປນຳຜູ້ອື່ນແຕ່ກົງກັນຂ້າມຜູ້ຊາຍພັດສາມາດໄປນຳໃຜກໍໄດ້ເພາະຖືວ່າເປັນຝ່າຍເສຍປຽບບໍ່ມີຫຍັງເສຍຫາຍ

- **ຄວາມທຸກຍາກ**

- ຄວາມທຸກຍາກຈະນຳຜົນກະທົບມາໃຫ້ແມ່ຍິງໂດຍກົງສ່ວນຫຼາຍຜູ້ຍິງຈະເປັນຜູ້ທີ່ເສຍສະຫຼະເຊັ່ນ: ຍອມຖືກຂາຍ, ຍອມອອກໂຮງຮຽນ, ຍອມເປັນໂສເພນີ, ຍອມເປັນລູກຈ້າງ, ຍອມໄປເຮັດວຽກເປັນຄົນໃຊ້, ຍອມອົດທົນເພື່ອໃຫ້ຄົນອື່ນສະບາຍ
- ມີຫຼາຍຄົນຕ້ອງອົດລຳບາກຕື່ນເດິກລຸກເຊົ້າທຳການຜະລິດຫຼັງສູ້ຟ້າໜ້າສູ້ດິນເພື່ອສົ່ງລູກຮຽນໜັງສື.
- ບາງຄົນເຮັດວຽກຈົນບໍ່ມີເວລາເບິ່ງແຍງຕົນເອງພາໃຫ້ສາມີເກີດການເບື່ອໜ່າຍສຸດທ້າຍກໍປະຖິ້ມໄປຫາຍິງໃໝ່
- ຄວາມທຸກຍາກເປັນຕົ້ນເຫດໃຫ້ມີການເຄື່ອນຍ້າຍເພື່ອສ້າງລາຍໄດ້

- **ສະພາບແວດລ້ອມ (ບ່ອນພັກເຊົາ,ບ່ອນເຮັດວຽກ)**

- ຖ້າຜູ້ຊາຍ ຫຼື ຜູ້ຍິງທີ່ຢູ່ໃນສະພາບແວດລ້ອມຂອງຄວາມສ່ຽງເຊັ່ນ : ໄດ້ເຮັດການໃນສະຖານທີ່ບໍລິການ ຫຼື ຮ້ານເຕັ້ນລຳຕ່າງໆ ກໍຈະມີໂອກາດສ່ຽງ
- ຜູ້ຊາຍ ຫຼື ຜູ້ຍິງທີ່ເຊົ່າບ້ານຢູ່ຮ່ວມກັບສາວບໍລິການພັກຢູ່ໃກ້
- ຜູ້ຊາຍທີ່ເຊົ່າບ້ານຢູ່ຜູ້ດຽວ

- **ການເຄື່ອນຍ້າຍແຮງງານ**

- ອາຊີບບາງຢ່າງຈຳເປັນຕ້ອງເຄື່ອນຍ້າຍຕະຫຼອດເຊັ່ນ : ຄົນຂັບລົດຂົນສົ່ງ, ທະຫານ, ຕຳຫຼວດ, ຄູ, ຊາວປະມົງ, ແພດ, ພາສີ, ພະນັກງານບໍລິສັດເອກະຊົນ, ນັກບິນ, ສາວອາກາດ ແລະ ອື່ນໆ
- ການເຄື່ອນຍ້າຍພາໃຫ້ມີຄວາມເຫງົາທີ່ໄດ້ພັດພາກຈາກຄອບຄົວ ຫຼື ແຟນພາໃຫ້ຕ້ອງມີຄວາມຕ້ອງຜ່ອນຄາຍອາລົມດ້ວຍວິທີການຕ່າງໆສ່ວນຫຼາຍແມ່ນຈະຊອກຫາສາວບໍລິການ
- ມີຄົນເຄື່ອນຍ້າຍເຂົ້າມາໃນພື້ນທີ່ຫລາຍເທົ່າໃດຍິ່ງເປັນຜົນກະທົບໃສ່ແມ່ຍິງທີ່ຈະສ່ຽງກັບໂລກເອດໃນທີ່ນັ້ນ
- ການອອກໄປຫາວຽກເຮັດງານທຳຢູ່ຕ່າງແຂວງຫລືຕ່າງປະເທດແບບຖືກກົດຫມາຍຫລືຜິດກົດຫມາຍ

# ບົດທີ 6
# ການມີສ່ວນຮ່ວມໃນການໂຕ້ ຕອບໂລກເອດ

**<u>ຈຸດປະສົງ</u>**: ຫຼັງຈາກເຝິກອົບຮົມແລ້ວຜູ້ເຂົ້າຮ່ວມສາມາດ

- ບອກໄດ້ການສົ່ງເສີມການຮຽນຮູ້ບົດບາດຍິງຊາຍ
- ການຫຼຸດຜ່ອນຄວາມຮຸນແຮງທາງເພດ ແລະ ການຕໍ່ລອງ
- ບອກໄດ້ວິທີການໂຕ້ຕອບໂລກເອດ

**<u>ເວລາ</u>**: 30 ນາທີ

**<u>ອຸປະກອນ</u>**: ເຈ້ຍ A0, ເຟີດ, ເຈ້ຍໃຫຍ່

**<u>ບາດກ້າວ</u>**:

1. ຮ້ອງເພງບົດບາດຍິງຊາຍ “ ຂະຫຍັນຂັນແຂງ “
2. ລະດົມຄວາມຄິດລວມການມີສ່ວນຮ່ວມໃນການຕອບໂຕ້ໂລກເອດເຮົາຕ້ອງເຮັດແນວໃດ ?
3. ຂຽນຄຳຄິດຄຳເຫັນຂອງເດັກໃສ່ເຈ້ຍແຜ່ນໃຫຍ່
4. ນຳສະເໜີການມີສ່ວນຮ່ວມໃນການຕອບໂຕ້ໂລກເອດ
5. ຫຼິ້ນເກມ ເງື່ອນມະນຸດ

**<u>ເນື້ອໃນ</u>**:

1. **ເພງ ບົດບາດຍິງ-ຊາຍ “ ຂະຫຍັນຂັນແຂງ “**

| | | | |
|---|---|---|---|
| **Ø** | ຍິງ | ຕື່ນເຊົ້າມາ | ທຸກຄົນຂະຫຍັນຟ້າວຟັ່ງ |
| | | ເຮັດວຽກທຸກຢ່າງ | ບໍ່ຢ້ານລຳບາກແນວໃດ |
| | ຊາຍ | ວຽກໄຮ່ວຽກສວນ | ຫຼືວຽກອື່ນໃດ ( ຊ້ຳ ) |
| | | ຊາຍບໍ່ເຄີຍທໍ້ໃຈ | ທ້າວທັນສະເໝີ |
| **Ø** | ຍິງ | ຮ່ຳຮຽນ | ສອງເຮົາແຂ່ງກັນທີໜຶ່ງ |
| | | ເຈົ້າໜຶ່ງຂ້ອຍໜຶ່ງ | ບຸກບືນຮ່ຳຮຽນ |

| | | |
|---|---|---|
| ຊາຍ | ອອກແຮງງານ | ຕ່າງກໍ່ພາກພຽນ ( ຊໍ້າ ) |
| | ຄຽງຄູ່ການຮຽນ | ສິລະປະກິລາ |
| **Ø** ລວມ | ເຮົາມາ | ພ້ອມກັນຄຽງຄູ່ |
| | ເຈົ້າຢ່າຢູ່ | ເສີຍເມີຍເລີຍໜາ |
| | ເຮົາຫຼິ້ນເຮົາຮຽນ | ເຝິກແອບກິລາ ( ຊໍ້າ ) |
| | ສິລະປະນັ້ນນາ | ຮ່ວມສະແດງດ້ວຍກັນ ( ຊໍ້າ ) |

2. **ການມີສ່ວນຮ່ວມໃນການໂຕ້ຕອບໂລກເອດ**

**Ø ການສົ່ງເສີມການຮຽນຮູ້ບົດບາດຍິງຊາຍ**

- ອະທິບາຍຄວາມເຂົ້າໃຈທີ່ຜິດໄດ້ປະຕິບັດກັນມາໃຫ້ປ່ຽນແປງໃໝ່
- ປ່ຽນແປງແນວຄິດ ແລະ ການກະທຳທີ່ມີຜົນກະທົບຕໍ່ແມ່ຍິງ
- ການໃຫ້ກຽດແມ່ຍິງໃນວົງສັງຄົມ
- ຊຸກຍູ້ໃຫ້ແມ່ຍິງ ແລະ ຜູ້ຊາຍສາມາດສົນທະນາບັນຫາເລື່ອງເພດໄດ້ຄືກັນ

**Ø ການຊ່ວຍເຫຼືອ ແລະ ການເບິ່ງແຍງຂອງຜູ້ຊາຍ**

- ຊຸກຍູ້ໃຫ້ຜູ້ຊາຍເຮັດບົດບາດເປັນພໍ່ທີ່ຖືກຕ້ອງ
- ຊຸກຍູ້ໃຫ້ຜູ້ຊາຍເພີ່ມເວລາມາຊ່ວຍວຽກຄອບຄົວໃຫ້ຫຼາຍຂື້ນ
- ຊຸກຍູ້ໃຫ້ຜູ້ຊາຍ ແລະ ຜູ້ຍິງຫັນໜ້າມາເວົ້າກັນເພື່ອແລກປ່ຽນຄວາມຄິດເຫັນ ແລະ ປັບປຸງປ່ຽນແປງຊຶ່ງກັນແລະກັນ

**Ø ຫຼຸດຜ່ອນຄວາມຮຸນແຮງທາງເພດ ແລະ ການຕໍ່ລອງ**

- ຊຸກຍູ້ໃຫ້ຜູ້ຊາຍເປີດເຜີຍພຶດຕິກຳທາງເພດຂອງຕົນເອງຕໍ່ແມ່ຍິງ
- ຊຸກຍູ້ໃຫ້ແມ່ຍິງມີສິດໃນການຕໍ່ລອງເລື່ອງເພດ
- ຊຸກຍູ້ໃຫ້ຜູ້ຊາຍມີຄວາມຮັບຜິດຊອບໃນການຊອກຫາການປິ່ນປົວ ພຕພ ແລະ ຮັບຄຳປຶກສາ
- ສ້າງຄວາມເຂົ້າໃຈໃນການມີເພດສຳພັນລະຫວ່າງຊາຍກັບຊາຍໃຫ້ຖືກຕ້ອງ ແລະ ປອດໄພ.

3. **ເກມເງື່ອນມະນຸດ**

ຢືນເປັນວົງມົນແບ່ງຜູ້ເຂົ້າຮ່ວມເປັນ4ກຸ່ມ

- ໃຫ້ຄົນໃນວົງມົນເອົາມືຂວາຈັບມືຂວາຜູ້ຢູ່ທາງໜ້າ
- ແລ້ວເອົາມືຊ້າຍຈັບກັບຜູ້ໃດກໍໄດ້ໃນວົງມົນ
- ຫລັງຈາກນັ້ນກໍ່ແກ້ອອກໂດຍບໍ່ໃຫ້ຂັດກັນ
- ກຸ່ມໃດແລ້ວກ່ອນປັນຜູ້ຊະນະ

# ຄູ່ມືການເຝິກອົບຮົມ
# ຄູນຳພາ-ຄູເຝິກ
# ແລະ ອາສາສະໝັກ

# " ກຸ່ມເພື່ອນຮັກ "

## ປີ 2008

ຈັດພິມໂດຍສູນອົບຮົມຮ່ວມພັດທະນາ

ອຸປະຖຳໂດຍ IOGT

**ຕາຕະລາງຄັດເລືອກອາສາສະໝັກ**

**ຄັ້ງວັນທີ** 25-26/09/2008

| ລ/ດ | ຜູ້ລົງເກັບກຳ | ສະຖານທີ່ |
|---|---|---|
| 1 | ທ.ວົງມາດ ( ໂອເລ່ ) | ມ.ສ ສີໂຄດ + ມ.ຕ ສີຖານເໜືອ |
| 2 | ທ. ອານັນ ( ໂຕ່ ) | ມ.ສ ສາລະຄຳ + ມ.ປ ບໍ່ໂອ |
| 3 | ທ. ພຽງທອງ | ມ.ສ ທົ່ງປົ່ງ + ມ.ສ ນາຊາຍທອງ |
| 4 | ທ. ບຸນເພັງ | ມ.ສ ໄຜ່ລ້ອມ + ມ.ສ ທ່າງ່ອນ |
| 5 | ທ. ໜໍ່ຄຳ ( ຈ່ອຍ ) | ມ.ຕ ໜອງໜ່ຽງ + ມ.ຕ ສີວິໄລ |
| 6 | ທ. ພັນມະຫາ ( ແປ ) | ມ.ຕ ສີສັດຕະນາກ + ມ.ປ ບໍ່ນາງົວ |
| 7 | ນ. ຄອນມະລີ ( ກິ້ງ ) | ມ.ສ ໄຊເສດຖາ + ມ.ປ ໂນນສະຫ່ວາງ |